# ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ສາຂາທີ 8 “ສາຂາຫຼວງພະບາງ”
# ຈະເປີດໃຫ້ບໍລິການແລ້ວ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ແມ່ນດໍາເນີນທຸລະກິດຈັດຈໍາໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ, ຕົບແຕ່ງເຮືອນ ແລະ ອາຄານ ແບບຄົບວົງຈອນ ຕັ້ງແຕ່ວັດສະດຸກໍ່ສ້າງໂຄງສ້າງຫຼັກຈົນເຖິງວັດສະດຸຕົບແຕ່ງພາຍໃນເຊັ່ນ: ກະໂລ້, ສຸຂະພັນ, ນໍ້າສີ, ວັດສະດຸຕົບແຕ່ງເຮືອນ ແລະ ອາຄານສໍານັກງານຕ່າງໆ, ເຄື່ອງມືອຸປະກອນທີ່ໃຊ້ໃນວຽກງານກໍ່ສ້າງ, ເຟີນີເຈີ ລວມທັງ ການໃຫ້ບໍລິການແບບຄົບວົງຈອນໃຫ້ແກ່ລູກຄ້າເຊັ່ນ: ໃຫ້ຄໍາແນະນໍາການເລືອກສິນຄ້າ, ການອອກແບບພາຍໃນຫ້ອງຄົວ - ຫ້ອງນໍ້າ, ຫຼັງຄາ ພ້ອມການປະເມີນລາຄາ, ບໍລິການຮັບຕິດຕັ້ງແບບມືອາຊີບ ແລະ ບໍລິການຈັດສົ່ງສິນຄ້າເຖິງມືລູກຄ້າ.

ໃນວັນທີ 3 ຕຸລາ 2024 ທີ່ຈະມາເຖິງນີ້ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຈະໄດ້ມີການເປີດສາຂາໃໝ່ ຄື: ສາຂາຫຼວງພະບາງ ເຊິ່ງເປັນສາຂາທີ 8 ທີ່ຕັ້ງຢູ່ ຖະໜົນເລກທີ 13 ເໜືອ ບ້ານພອນໄຊ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ເພື່ອເປັນການສະຫຼອງສາຂາໃໝ່ໃນມື້ເປີດທົດລອງຂາຍ **“Soft Opening”** ຈະມີການຈັດໂປຣໂມຊັນຫຼາຍໆຢ່າງພາຍໃນງານ ລະຫວ່າງວັນທີ 03-05 ຕຸລາ 2024 ເປັນຕົ້ນກິດຈະກໍາຈັບສະຫຼາກ ເພື່ອລຸ້ນຮັບຂອງລາງວັນຫຼາກຫຼາຍ “ຢ່າພາດ!!! ມາຮ່ວມງານນໍາກັນ ທີ່ ສາຂາຫຼວງພະບາງ”




